# ຄູ່ມືຜູ້ນຳ ຫລັກສູດ ສ.ອ.ນ ມັດທາຍ ເຫລັ້ມທີ 2

## ຄຳນຳ

ການປະຊຸມທຸກໆ ເທື່ອຈະປະກອບດ້ວຍ 4 ສ່ວນດັ່ງຕໍ່ໄປນີ້:

1. *ການນະມັດສະການ (10 ນາທີ)*
   ໃຫ້ເລີ້ມຕົ້ນທຸກປະຊຸມດ້ວຍການນະມັດສະການ ທີ່ປະກອບດ້ວຍການຮ້ອງເພງ, ການເລົ່າຄວາມພະ ຍານ ຫຼືສະເຫນີບັນຫາກ່ຽວກັບບຸກຄົນກໍດີ, ກ່ຽວກັບພວກຄຣິສຕຽນທີ່ບ້ານໃຜບ້ານລາວກໍດີ ແລ້ວ ຕອນສຸດທ້າຍຮ່ວມອ້ອນວອນເພື່ອກັນແລະກັນ ແລະເພື່ອຄຣິສຕຽນທັງປວງ.

2. *ຄຳອະທິບາຍແລ້ວຮຽນຄືນ (20 ນາທີ)*
   ກ. ການເສັງໃນປະຊຸມ: ໃຫ້ທ່ານຕຽມຄຳຖາມ 2 ຫຼື 3 ປະການ ທີ່ທ່ານຍົກມາຈາກບົດສອນໃນແຕ່ລະຫມວດ. ການເສັງໃນປະຊຸມນີ້ ເສັງດ້ວຍປາກເປົ່າກໍໄດ້, ເສັງໃສ່ເຈັ້ຍກໍໄດ້, ແລ້ວແຕ່ທ່ານເຫັນດີ. ໃຫ້ທ່ານຈັດການເສັງນີ້ໄວ້ກ່ອນ ສິ່ງອື່ນໆ ເພື່ອທ່ານຈະສັງເກດສ່ວນອ່ອນແອຂອງຜູ້ມາຮຽນ ດັ່ງນັ້ນທ່ານຈະສາມາດເນັ້ນຫນັກສອນສ່ວນອ່ອນແອນັ້ນ.
   ຂ. ກວດການບ້ານ: ໃຫ້ທ່ານກວດເບິ່ງວ່າເຂົາໄດ້ຕອບຄຳຖາມຫມົດບໍ່? ບົດຝຶກຫັດເດໄດ້ເຮັດໃສ່ພະຄຳພີຕາມທີ່ບອກແລ້ວຫມົດທຸກຄົນບໍ່?
   ງ. ກວດບົດເສັງໃນຫຼັກສູດສອນ: ທ່ານອ່ານຄຳຕອບຂອງບົດເສັງໃນທ້າຍສຸດຂອງຄູ່ມືນີ້ ໃຫ້ເຂົາກວດຄຳຕອບຂອງໃຜຂອງລາວເອງ. ຖ້າທ່ານສັງເກດວ່າມີດ້ານໃດທີ່ອ່ອນແອທ່ານຕ້ອງສອນ ຊ້ຳເລື່ອງນັ້ນກໍໄດ້.
   ຈ. ການແຈ້ງຊື່ໃນບັນທຶກ: ຢ່າລືມ! ຕ້ອງເຮັດທຸກເທື່ອ.

3. *ການປຶກສາຫາລື ແລະນຳບົດຮຽນມາໃຊ້ (1 ຊົ່ວໂມງ)*
   ກ. ຄຳຖາມ ແລະ ຈຸດສຳຄັນ: ກ່ອນຈະມາຮ່ວມປະຊຸມແຕ່ລະຫມວດ ໃຫ້ທ່ານເອງຕຽມໂຄງຮ່າງໄວ້ດີໆ. ຄູ່ມືນີ້ມີຂໍ້ສະເຫນີເພື່ອແຕ່ລະຫມວດ ແຕ່ຂໍ້ສະເຫນີເຫຼົ່ານີ້ບໍ່ຕາຍຕົວ ເຖິງວ່າທ່ານ ຈະຕຽມໂຄງຮ່າງໃດກໍຕາມ ແຕ່ ຢ່າຜິດຈາກເປົ້າຫມາຍນີ້ໄປເນີ! ທ່ານຈົ່ງຈັດໃຫ້ການນະມັດສະການເຂົ້າກັບບົດສອນອີກດ້ວຍ ແຕ່ຈົ່ງຕຽມຕົວດີໆ ກ່ອນປະຊຸມ.
   ຂ. ການປະຕິບັດ: ໃຫ້ທ່ານເອົາວຽກບ້ານໃຫ້ເຂົາລົງໄປປະຕິບັດຕົວຈິງ ຕາມພອນສະຫວັນຂອງໃຜລາວແຕ່ໃຫ້ວຽກນັ້ນ ຖືກກັບບົດຮຽນໃນປະຊຸມໃນອາທິດຫນ້າ. ຜູ້ມາຮຽນທຸກຄົນສົມຄວນຈະຮັບພາລະຢ່າງຫນຶ່ງຢ່າງໃດໃນຄຣິສຕຈັກ ຂອງເຂົາ.

4. *ປິດປະຊຸມສອນ (5 ນາທີ)*
   ໃຫ້ທ່ານແຕ່ງຕັ້ງວຽກການບ້ານດີ ໆ ແລະໃຫ້ອ່ານເປົ້າຫມາຍໃນຫມວດຕໍ່ໄປເພື່ອອາທິດຫນ້າ. ຈຸດໃດໃນບົດຮຽນທີ່ ອາດຈະຍາກໂພດ ໃຫ້ທ່ານພະຍາຍາມອະທິບາຍກ່ອນ.

ສຸດທ້າຍໃຫ້ປິດປະຊຸມດ້ວຍການອ້ອນວອນ!

# ການປະຊຸມ ເລີ້ມຕົ້ນ

1. ໃນປະຊຸມທຳອິດນີ້ ໃຫ້ທ່ານແຈກຢາຍປື້ມຮຽນ ແລະບອກເຂົາໄວ້ວ່າ ເຂົາຍັງຈະຕ້ອງການ:
   ກ. ພະຄຳພີ ຢ່າງຫນ້ອຍຕ້ອງການສະບັບປີ 1979 ຊຶ່ງມີແຕ່ 45% ຂອງພະຄຳພີເດີມ. ຖ້າຕໍ່ໄປມີເຕັມທັງພະຄຳພີເດີມ ແລະ ພະຄຳພີໃຫມ່ຍິ່ງດີ.
   ຂ. ຖ້າເປັນໄປໄດ້ຢາກ ໃຫ້ມີສໍສີແດງ ສີຂຽວ ສີຟ້າ ແລະສີເຫຼືອງ, ຖ້າບໍ່ມີສີເຫຼົ່ານັ້ນ ເອົາສີ ອື່ນແທນກໍໄດ້.

2. ໃຫ້ຈົດຊື່ລົງທະບຽນຕາມລຳດັບ.

3. ໃຫ້ທ່ານທວນຄືນເນື້ອຄວາມຂອງຫຼັກສູດ ມັດທາຍ ເຫລັ້ມທີ 1 ແລະໃຫ້ເບິ່ງໃນສາລະບານເລື່ອງທີ່ເຂົາຈະເລີ້ມຕົ້ນຮຽນໃນ ຫຼັກສູດ ມັດທາຍ ເຫລັ້ມທີ 2 ນີ້.

4. ຈົ່ງເຕືອນເຂົາວ່າທຸກຄົນທີ່ມາຮຽນສົມຄວນຈະເຂົ້າຮ່ວມໃນການປຶກສາຫາລືກັນ, ບໍ່ຢາກໃຫ້ຜູ້ໃດ ຫນ້າອາຍປາກ.

5. ຖ້າຍັງມີເວລາເຫຼືອຢູ່ທ່ານຈົ່ງຖາມເຂົາວ່າ:
   ກ. ເຮົາຈະຮຽນເລື່ອງບາດກ້າວໃດ ໃນສະໄຫມພະເຢຊູປ່າວປະກາດ?
   ຂ. ເປັນຫຍັງເຮົາແບ່ງຊີວິດຂອງພະເຢຊູ ເປັນ 5 ສະໄຫມ?
   ຄ. ເຮົາຈະໃຊ້ແຜນທີ່ສອນເລື່ອງຊີວິດຂອງພະເຢຊູ ໄດ້ຢ່າງໃດ?

---

# ການປະຊຸມ ເທື່ອທີ 1 (ຫມວດ 1)

ໃຫ້ທ່ານຕຽມຕົວກ່ອນປະຊຸມ: ຖ້າທ່ານມີໂອກາດສຶກສາກ່ຽວກັບໂຢຮັນບັບຕິສະໂຕກ່ອນ ໃຫ້ທ່ານໄດ້ ຮຽນຫລາຍເທົ່າທີ່ຈະຮຽນໄດ້.

ໃຫ້ທ່ານຕຽມແຜ່ນເຈັ້ຍແຂງ 9 ແຜ່ນໄວ້ແລະ ຂຽນເຫດການໃນສະໄຫມປີທີ່ພະອົງຕຽມຕົວໄວ້ 9 ປະການຄື: ໃບລະປະການ.

<u>ໃນການປະຊຸມ</u>

1. ໃຫ້ທ່ານກວດເບິ່ງວ່າ ເຂົາເອົາສໍສີຂຽວຂີດເສັ້ນກ້ອງຂໍ້ພະຄຳພີຕາມຄຳ "ຝຶກ" ໃນຫມວດນີ້ບໍ່?

2. ເພື່ອຈະໃຫ້ເຂົາ ເຂົ້າໃຈວິທີຮຽນພະຄຳພີຕ່າງໆ ນັ້ນ ໃຫ້ເຂົາເປີດເບິ່ງ ມາລະໂກ 14:3-9.
   ກ. ດ້ວຍວິທີສັງເກດ ໃຫ້ເຂົາບົ່ງຈຸດສຳຄັນໄວ້.
   ຂ. ດ້ວຍໃຊ້ວິທີອະທິບາຍໃຫ້ເຂົາແຈ້ງເລື່ອງຄວາມໃດທີ່ອາດຈະຍັງຍາກຢູ່ (ຄື ບ້ານເບດທາເນຍ ໆລໆ)
   ຄ. ໃຫ້ທ່ານອ່ານ ໂຢຮັນ 12:1-8 ແລ້ວເອົາຕອນນັ້ນມາປຽບທຽບກັບ ມາລະໂກ 14:3-9 ເຫັນຈຸດໃຫມ່ບໍ່? (ຂຽນ ໃສ່ເຈັ້ຍກໍໄດ້ ໃຊ້ກະດານກໍໄດ້)

ງ. ໃຫ້ເຂົາເລົ່າເລື່ອງເຫດການນີ້ທັງຫມົດ. (ຕອບ: ລວມລາຍລະອຽດຈາກ ມາລະໂກ ແລະໂຢຮັນ ດ້ວຍ)

ຈ. ຕໍ່ໄປນີ້ໃຫ້ໃຊ້ວິທີນໍາມາໃຊ້ໃນການສະເຫນີການກະທໍາຂອງຍິງນັ້ນ ການກະທໍາຂອງຢູດາ ແລະ ຄວາມເວົ້າຂອງພະ ເຢຊູ.

3. ໃຫ້ທ່ານເອົາແຜ່ນເຈ້ຍແຂງ 9 ໃບ, ທີ່ຂຽນເຫດການ 9 ປະການໄວ້ ແລ້ວໃຫ້ຜູ້ມາຮຽນຈັດແບ່ງເອົາໄວ້ວ່າ ເຫດການອັນໃດຖືກບັນທຶກໄວ້ໃນຂ່າວປະເສີດ ມັດທາຍ ອັນໃດຖືກບັນທຶກໄວ້ໃນຂ່າວປະເສີດໂຢຮັນ. ຕໍ່ໄປໃຫ້ເຂົາຈັດໄວ້ລຽງຕາມລໍາດັບ ໃຫ້ຖືກກັບເຫດການໃດທີ່ເກີດກ່ອນ ແລະ ເຫດການໃດເກີດທີຫຼັງ ຕາມບົດຮຽນຜ່ານມາ. ຖາມເຂົາຕື່ມອີກວ່າ ແມ່ນດ້ວຍເຫດໃດທີ່ເຮົາຈັດຕາມລໍາດັບຢ່າງນັ້ນໄດ້? (ຕອບ: ຄືປຽບກັບຊີວິດ ໂຢຮັນບັບຕິສະໂຕ ແລະ ຫຼັກອື່ນ ໆ ຈາກ ມາລະໂກ 1:12 ໂຢຮັນ 1:35 ຢຮ 2:1 ຢຮ 4:43)

<u>ຖ້າຍັງມີເວລາເຫຼືອຢູ່ ຮຽນຊໍ້າດັ່ງຕໍ່ໄປນີ້ກໍໄດ້.</u>

1. ຮັບພິຈາລະນາກ່ຽວກັບເຫດການ 9 ປະການ ໃນສະໄຫມປີທີ່ພະເຢຊູຕຽມຕົວ ເຂົາຮູ້ເຫດການເຫຼົ່ານັ້ນຕາມລໍາດັບເວລາ ທີ່ເກີດກ່ອນ ແລະອັນໃດເກີດຂຶ້ນຕາມທີຫຼັງແລ້ວບໍ່?
2. ໃຫ້ຍົກເລື່ອງວ່າ ຂ່າວປະເສີດ 3 ເຫລັ້ມແລກ ແຕກຕ່າງກັນກັບຂ່າວປະເສີດໂຢຮັນຢ່າງໃດ? ຄ້າຍຄືກັນຢ່າງໃດ?
3. ສ່ວນຜູ້ທີ່ຕິວ່າ ຂ່າວປະເສີດ 4 ເຫລັ້ມນັ້ນ ບໍ່ເປັນຕາໄວ້ໃຈ ເພາະຜູ້ຂຽນບັນທຶກຂຽນໄປຄົນລະຢ່າງຈະຕອບຢ່າງໃດ?
4. ຖ້າເຫດການໃດຫນຶ່ງມີການລາຍງານສອງສາມບ່ອນໃນພະຄໍາພີ ແຕ່ພະຄໍາພີຕອນຫນຶ່ງເວົ້າໄປຢ່າງຫນຶ່ງ ແລະອີກຕອນ ຫນຶ່ງລາຍງານຕ່າງໄປອີກຈັກຫນ້ອຍ ເຮົາຈະໃຊ້ວິທີຮຽນດ້ວຍການປຽບທຽບໄດ້ຢ່າງໃດ? (ຕອບ:ໃນຫນ້າທໍາອິດຂອງຄູ່ມືນີ້ ມີຄໍານໍາທີ່ສະເຫນີ 4 ຂໍ້,ການປະຊຸມທຸກໆ ເທື່ອຕ້ອງປະ ກອບດ້ວຍ4 ຂໍ້ນັ້ນ ແຕ່ໂຄງຮ່າງໃນການປຶກສາຫາລືກັນນີ້ ເຂົ້າກັນກັບແຕ່ຂໍ້ທີ 3 ເທົ່ານັ້ນ, ຫມາຍຄວາມວ່າໃນປະຊຸມແຕ່ລະເທື່ອ ໃຫ້ທ່ານເປັນຜູ້ຕຽມຄື:1. ການນະມັດສະການ 2 ຄໍາອະທິບາຍແລະຮຽນຄືນ.3 ການປຶກສາຫາລື ແລະ ນໍາບົດຮຽນມາ ໃຊ້ດ້ວຍ. ແຕ່ວາຄູ່ມືຄູຈະມີໂຄງຮ່າງມາຊ່ວຍແຕ່ສະເພາະໃນ ຂໍ້ 3. ພຽງຂໍ້ດຽວເທົ່ານັ້ນ. ການປະຊຸມ ທຸກໆ ເທື່ອຈະເປັນແບບດຽວກັນທັງຫມົດ ຄືແບບຈາກຄໍານໍາໃນຫນ້າປົກນັ້ນ ແຕ່ຄູ່ມືຄູນີ້ຊ່ວຍສະເພາະແຕ່ ຂໍ້ 3. ທຸກເທື່ອ ເພາະເຫດນັ້ນ ທ່ານຈຶ່ງຕຽມແຜນການສອນໄວ້ລ່ວງຫນ້າທຸກ ເທື່ອ.)

ຄໍາຕອບບົດເສັງໃນແຕ່ລະຫມວດ ມີຈັດໄວ້ໃນສ່ວນທ້າຍຂອງຄູ່ມືເຫລັ້ມນີ້.

# ການປະຊຸມ ເທື່ອທີ 2 (ໝວດ 2)

ໃຫ້ທ່ານຕຽມຕົວກ່ອນປະຊຸມ: ຖ້າທ່ານເອງມີໂອກາດຄົ້ນຄວ້າຈາກປຶ້ມໃດກໍດີ ເລື່ອງພວກ ຟາລີຊາຍ ຫຼື ພວກຊາດູກາຍ, ທ່ານຈະສາມາດສອນໄດ້ ດ້ວຍຄວາມຮູ້ຢ່າງຄົບ ຖ້ວນ. ທ່ານ ຢ່າລືມເອົາຄູ່ມືຜູ້ນຳນີ້ໄປດ້ວຍ ເພື່ອຈະກວດຄຳຕອບ ໃນບົດເສັງຂອງເຂົາ.

ໃນການປະຊຸມ:

1. ໃຫ້ທ່ານກວດເບິ່ງວ່າ ເຂົາເອົາສໍສີແດງຂີດກ້ອງຄວາມ "ອານາຈັກ" ໃນ ມັດທາຍ 3:2 ແລ້ວບໍ່?
2. ໂຢຮັນບັບຕິສະໂຕ ຍົກສັນຍາລັກມາສະແດງວ່າ ຜູ້ກ່ຽວໄດ້ຖິ້ມໃຈເກົ່າເອົາໃຈໃໝ່. ນອກ ຈາກສັນຍາລັກນັ້ນ ມີຫຼັກຖານໃດອີກ ໃນ ມັດທາຍ 3:8 ທີ່ເຂົາຖິ້ມໃຈເກົ່າເອົາໃຈໃໝ່? ການ ຮັບສິນບັບຕິສະມາເປັນຫຼັກຖານແນ່ນອນບໍ່? ມີຫຼັກໃດທີ່ແນ່ນອນ?
3. ໃຫ້ສະເໜີຕົວຢ່າງ ຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່ບໍ່ເຕັມສ່ວນ (ຕອບ: ຍົກຈາກພະຄຳພີກໍໄດ້ ຍົກຈາກປະສົບປະການຂອງ ຜູ້ມາຮຽນກໍໄດ້) ໃຫ້ຍົກສະເໜີຕົວຢ່າງ ບາງປະການຂອງຄົນທີ່ ຖິ້ມໃຈເກົ່າເອົາໃຈໃໝ່ດ້ວຍໃຈຈິງ.
4. ບາດກ້າວໃນການຖິ້ມໃຈເກົ່າເອົາໃຈໃໝ່ຄືຫຍັງ? ເປັນຫຍັງຈຶ່ງຂາດບາດກ້າວໜຶ່ງບາດກ້າວ ໃດ ບໍ່ໄດ້?
5. ພວກຟາລີຊາຍສອນຜິດຢ່າງໃດ ກ່ຽວກັບພະຄຳພີ? ມີຄຣິສຕຽນທີ່ສອນຜິດໃນທຳນອງດຽວກັນ ບໍ່? ພວກຊາດູກາຍ ຜິດ ຢ່າງໃດກ່ຽວກັບພະຄຳພີ? ຄົນໃນສະໄໝນີ້ມີຜູ້ຜິດຢ່າງນັ້ນບໍ່? ຄົນ ໃນທຸກມື້ນີ້ ເຄີຍເອົາຫຍັງມາເພີ້ມໃສ່ພະຄຳພີ? (ຕອບ: ຄືເອົາກົດລະບຽບໃນຄຣິສຕະຈັກທີ່ ນອກເໜືອ ຈາກຄຳສັ່ງໃນພະຄຳພີ)
6. ເປັນຫຍັງຄຳວ່າ "ເກືອ" ເປັນຄຳທີ່ປຽບທຽບກັບຄົນຄຣິສຕຽນໄດ້?
7. ໃຫ້ປຶກສາຫາລືກັນກ່ຽວກັບຄຳຖາມໃນຕອນສຸດທ້າຍຂອງ ບົດທີ 3 ໃນຂໍ້ພະຄຳພີດັ່ງຕໍ່ໄປນີ້ເວົ້າ ເຖິງຜູ້ທີ່ຖິ້ມໃຈເກົ່າເອົາໃຈ ໃໝ່ດ້ວຍໃຈຈິງຫຼືບໍ່? ອົບພະຍົບ 9:27-28 ລູກາ 19:7-9.
8. ໃຫ້ປຶກສາຫາລືກ່ຽວກັບສັນຍາລັກທີ່ເຮົາພົບໃນທຸກວັນນີ້. ໃຫ້ຮຽນຄືນຄວາມທີ່ໂຢຮັນບັບຕິສະ ໂຕກັບພະເຢຊູໃຊ້ເພື່ອປຽບ ທຽບພວກຟາລີຊາຍແລະຊາດູກາຍ.ໃຫ້ປຶກສາຫາລືກັນເລື່ອງສັນ ຍາລັກໃນຄຣິສຕະຈັກຄື: ໄມ້ກາງແຂນ, ຮູບພາບຕ່າງໆ.

9. ໃຫ້ຮຽນດ້ວຍວິທີປຽບທຽບເລື່ອງ ລັກສະນະຂອງພວກຟາລິຊາຍ ແລະຊາດູກາຍ. ແມ່ນພວກໃດ ທີ່ເຫັນໃຈພັກຊາດນິຍົມ, ພວກໃດເຫັນໃຈຜູ້ເກັບພາສີ. ຖາມເຂົາເຄີຍເຫັນຄຣິສຕຽນໃດແຍກ ເປັນສອງພັກບໍ່? ເຂົາແຍກເພາະເຫດໃດ? ຖ້າເຮົາຖືຫຼັກຂອງມະນຸດເທົ່າກັບພະຄໍາພີຈະເກີດມີຜົນຢ່າງໃດ ຖ້າຕັດບໍ່ເອົາສ່ວນທີ່ບໍ່ມັກໃນພະຄໍາພີອອກຈະເປັນຢ່າງໃດ? (ຕອບ: ຢ່າລືມວ່າ ໃນແຕ່ລະປະຊຸມໃຫ້ຕິດຕາມໂຄງຮ່າງໃນຄໍານໍາ, ຢ່າລືມໃຫ້ເຂົາເສັງໂດຍຄໍາຖາມ 2 ຫຼື 3 ຂໍ້ໃນປະຊຸມ)

---

# ການປະຊຸມ ເທື່ອທີ 3 (ຫມວດ 3)

<u>ໃຫ້ທ່ານຕຽມຕົວກ່ອນປະຊຸມ:</u> ທ່ານຢ່າຂີ້ຄ້ານໃນການຕຽມຕົວກ່ອນຈະປຶກສາຫາລືກັນໃນປະຊຸມ. ໃຫ້ຕຽມໂຄງຮ່າງໄວ້ກ່ອນເພື່ອຈະບໍ່ເສຍປຽບຕໍ່ຜູ້ມາຮຽນ. ຢ່າ ລືມເອົາຄູ່ມືຜູ້ນໍານີ້ໄປດ້ວຍ ເພາະຄໍາຕອບໃນບົດເສັງຂອງເຂົາຢູ່ ໃນນີ້. ຢ່າລືມຕຽມບົດເສັງເພື່ອໃຊ້ໃນປະຊຸມອີກດ້ວຍ.

(ຖ້າທ່ານບໍ່ຈື່ໂຄງຮ່າງໃນປະຊຸມທົ່ວໄປ ໃຫ້ກັບໄປເບິ່ງໃນຄໍານໍາ)

<u>ໃນການປະຊຸມ:</u>

1. ໃຫ້ທ່ານກວດເບິ່ງວ່າ ເຂົາແຕ້ມຮູບໃບໄມ້ທີ່ເປັນ 3 ແງ່ຕາມບົດຝຶກບອກບໍ່? ເຂົາຫມາຍໃນ ພະຄໍາພີດ້ວຍຂີດວົງມົນອ້ອມບໍ່?

2. ພະເຢຊູຊົງບໍລິສຸດສົມບູນບໍ່ມີຜິດ ແຕ່ເພື່ອຈະໃຫ້ມະນຸດເຮົາໄດ້ລອດພົ້ນຈາກຄວາມຜິດບາບ ພະເຢຊູຈໍາເປັນຕ້ອງຮ່ວມກັບມະນຸດຊຶ່ງເປັນຄົນບາບ. ພະເຢຊູຮັບສົມຢ່າງໃດໃນສະໄຫມປົຕຽມຕົວ ເພື່ອຈະຮ່ວມຊາດມະນຸດຢ່າງເປີດເຜີຍ. (ຕອບ: ໃຫ້ທຸກຄົນທີ່ມາຮຽນ ມີສ່ວນໃນການປຶກສາຫາລືກັນ)

3. ທັງສາມພະພາກໃນ ຕີເອກອະນຸພາບ ປາກົດໃຫ້ເຫັນມາໃນການຮັບສົມບັບຕິສະມານັ້ນ. ໃຫ້ເຂົາ ຊີ້ບອກ ແຕ່ລະພະພາກໃນພິທີນັ້ນ.

4. ພະເຢຊູຮ່ວມກັບມະນຸດຊຶ່ງເປັນຄົນບາບ ເຖິງວ່າພະອົງເອງບໍ່ໄດ້ເຮັດບາບຈັກເທື່ອ. ຖ້າເຮົາຈະປ່າວປະກາດຕໍ່ຄົນບາບ ສົມຄວນທີ່ຈະຮ່ວມກັບເຂົາຢ່າງໃດ? (ຕອບ: ໃຫ້ເຂົາແລກປ່ຽນຄວາມຄິດເຫັນກັນ)

5. ແມ່ນເພາະເຫດໃດ ທີ່ສາວົກຂອງພະເຢຊູ ຊຶ່ງເປັນຄົນຢິວບໍ່ຢາກເຊື່ອວ່າ ພະເຈົ້າອົງດຽວປະກອບດ້ວຍ ພະບິດາ ພະບຸດ ແລະ ພະວິນຍານບໍລິສຸດ?

6. ພະເຢຊູຊົງສັ່ງສາວົກໃນ ມັດທາຍ ບົດໃດ? ມີຫຼັກຖານເລື່ອງຕີເອກອະນຸພາບໃນຄໍາສັ່ງນັ້ນບໍ່?

7. ມີສາສະໜາໃດທີ່ບໍ່ເຊື່ອໃນ ຕີເອກອະນຸພາບ? (ໃຫ້ເຂົາຍົກສະເຫນີ) ພວກໃດທີ່ບໍ່ຮັບຮູ້ ຕີເອກອະນຸພາບ ຈະເອີ້ນວ່າ ເປັນຄຣິສຕຽນໄດ້ບໍ່?

8. ຖ້າຜູ້ໃດບອກວ່າ ໃຜບໍ່ເຂົ້າໃຈເລື່ອງຕີເອກອະນຸພາບ ເຂົາເຊື່ອບໍ່ໄດ້. ໃຫ້ເຂົາອ່ານ 1 ໂກລິນໂທ 13:12 ແລະ ໂຢຮັນ 14:20 ຖາມເຂົາວ່າມີສິ່ງໜຶ່ງສິ່ງໃດທີ່ບໍ່ເຂົ້າໃຈ ແຕ່ຍັງໄວ້ໃຈ ໄດ້ບໍ່? (ຕອບ: ເຊັ່ນ ເຮືອບິນ ໂທລະທັດ ໆລໆ)

*ໃຫ້ທ່ານຍົກສະເຫນີເປົ້າຫມາຍ ໃນຫມວດຫນ້າກ່ອນຈະປິດປະຊຸມ.*

---

# ການປະຊຸມ ເທື່ອທີ 4 (ຫມວດ 4)

<u>ໃຫ້ທ່ານຕຽມຕົວເອງກ່ອນປະຊຸມ:</u> ໃຫ້ທ່ານຕຽມຕົວໂດຍອາໄສ ໂຄງຮ່າງໃນ ຄຳນຳຄື:

1. ນະມັດສະການກ່ອນ.

2. ການອະທິບາຍແລະຮຽນຄືນ,
   ເສັງນ້ອຍໃນປະຊຸມ,
   ກວດບົດເສັງໃນຫຼັກສູດ ບົດທີ 9 ແລະ10,
   ແຈ້ງຊື່ໃນບັນທຶກ.

3. ປຶກສາຫາລື ແລະນຳມາໃຊ້: ໃຫ້ໃຊ້ຄຳຖາມຕໍ່ໄປນີ້ເປັນພື້ນຖານໃນໂຄງຮ່າງທີ່ທ່ານຈະຕຽມໄວ້:
   ກ. ໃຫ້ທ່ານກວດເບິ່ງວ່າ ເຂົາໃຊ້ສໍສີຂຽວຂີດກ້ອງຄຳຖາມໃນພະຄຳພີຕາມຄຳສັ່ງໃນບົດຝຶກຕ່າງ ໆ.
   ຂ. ຈົ່ງຖາມເຂົາວ່າ ຫຼັກຄວາມເຊື່ອອັນເກົ່າແກ່ ແລະອັນສຳຄັນທີ່ສຸດໃນປະຫວັດຄຣິສຕະຈັກຄືຫຼັກໃດ?ເຂົາຈົດຫຼັກນັ້ນ ໄວ້ເພາະເຫດການ 3 ປະການໃດ? ໃຫ້ເຂົາສະເຫນີນິກາຍຄຣິສຕຽນຕ່າງໆ ທີ່ ຖືຫຼັກນີ້ໄວ້.
   ຄ. ໃຫ້ເຂົາສະເຫນີຄຸນສົມບັດຂອງພະເຈົ້າ 4 ປະການ ແລະໃນແຕ່ລະປະການໃຫ້ເຂົາຍົກຂໍ້ພະຄຳພີທີ່ເປັນຫຼັກ.
   ງ. ໃຫ້ເຂົາປຽບທຽບສິ່ງທີ່ຈຳກັດແລະສິ່ງທີ່ບໍ່ຈຳກັດ.
   ຈ. ຄຸນສົມບັດຂອງພະເຈົ້າທີ່ເຮົາຮຽນມານັ້ນ ສະແດງສ່ວນທີ່ພະເຈົ້າບໍ່ເຫມືອນມະນຸດ. ພວກເຮົາມີສ່ວນໃດທີ່ມີລັກສະນະເຫມືອນກັນກັບພະເຈົ້າ? (ຄືຄວາມຮັກ ໆລໆ)
   ສ. ມີສະຖານະການໃດ ໃນຄຣິສຕະຈັກໃນສະໄຫມນັ້ນ ທີ່ເຂົາຕ້ອງຈົດບັນທຶກຈຸດສຳຄັນຂອງຫຼັກຄວາມເຊື່ອຄຣິສ ຕຽນນັ້ນໄວ້?

ຊ. ໃຫ້ພາກັນສຶກສາເລື່ອງພື້ນຖານຫຼັກຄວາມເຊື່ອນັ້ນໃນພະຄຳພີຄື:

— ຂ້າພະເຈົ້າເຊື່ອໄວ້ວາງໃຈໃນພະລາຊະບິດາເຈົ້າ ຜູ້ຊົງລິດທານຸພາບສູງສຸດ, ຜູ້ຊົງນິລະມິດສ້າງຟ້າແລະດິນ. (1 ກລທ 8:6)

— ຂ້າພະເຈົ້າເຊື່ອໄວ້ວາງໃຈໃນພະເຢຊູຄຣິດພະລາຊະບຸດອົງດຽວຂອງພະອົງ. (ໂຢຮັນ 3:16)

— ຜູ້ຊົງເປັນພະຜູ້ເປັນເຈົ້າຂອງຂ້າພະເຈົ້າທັງຫລາຍ. (ຟີລິບປອຍ 2:11)

— ພະອົງຊົງປະຕິສົນທິເປັນມະນຸດໂດຍທາງພະວິນຍານບໍລິສຸດ ຊົງ ປະສູດຈາກມາລີອາຍິງພົມມະຈາລີ. (ລູກາ 1:30-36)

— ຊົງ ທົນທຸກທໍລະມານດ້ວຍປີລາດຜູ້ປົກຄອງ, ຊົງ ຖືກຄຶງໄວ້ທີ່ໄມ້ກາງແຂນ, ຊົງ ສິ້ນພະຊົນ,ຊົງ ຖືກບັນຈຸໄວ້ໃນອຸໂມງ. (ລູກາ 23:1-56)

— ສະເດັດລົງໄປສູ່ແດນມໍລະນາ ໃນວັນຖ້ວນສາມພະອົງຊົງຄືນພະຊົນ ແລ້ວໄດ້ສະເດັດຂຶ້ນສູ່ສະຫວັນສະຖານ. (1 ເປໂຕ 3:18-22)

— ຊົງ ປະທັບຢູ່ກ້ຳຂວາຂອງພະລາຊະບິດາເຈົ້າ, ຜູ້ຊົງລິດທານຸພາບສູງສຸດ. (ເອເຟໂຊ 1:20)

— ຈາກນີ້ແຫລະ, ພະອົງຈະສະເດັດຄືນມາຊົງພິພາກສາທັງຄົນເປັນແລະຄົນຕາຍ. (1 ເປໂຕ 4:5)

— ຂ້າພະເຈົ້າເຊື່ອໃນອົງພະວິນຍານບໍລິສຸດ. (ກຈກ 2:1-4)

— ໃນຄຣິສຕະຈັກສາກົນອັນບໍລິສຸດ. (ມັດທາຍ 28:19)

— ໃນຄວາມສາມັກຄີທຳລະຫວ່າງໄພ່ພົນທັງປວງຂອງພະເຈົ້າ. (ພະນິມິດ 7:9-10)

— ໃນການພະລາຊະທານອະໄພໂທດບາບ. (ລູກາ 24:47)

— ໃນການຊົງບັນດານໃຫ້ຊາກຮ່າງກາຍຄືນມາຈາກຕາຍ. (1 ໂກລິນໂທ 15:1-15)

— ແລະ ໃນການຊົງໂຜດໃຫ້ຮັບຊີວິດອັນຕະຫລອດໄປເປັນນິດ. (ໂຢຮັນ 3:16) ອາແມນ

ຍ. ໃຫ້ເບິ່ງເປົ້າຫມາຍໃນ ຫມວດ 5 ກ່ອນປິດປະຊຸມ.

---

# ການປະຊຸມ ເທື່ອທີ 5 (ຫມວດ 5)

<u>ທ່ານຈົ່ງຕຽມຕົວໄວ້ກ່ອນ:</u> ໃຫ້ເຮັດຕາມເຄີຍ ຈົ່ງຕຽມໂຄງຮ່າງໄວ້ໃຫ້ລວມທຸກສ່ວນໃນປະຊຸມ, ໃຫ້ຈົດໄວ້ຢ່າງລະອຽດດີເພື່ອໃນເວລາປະຊຸມຈະອ່ານໄດ້ງ່າຍ. ຈົ່ງຕຽມບົດເສັງໃຊ້ໃນປະຊຸມ ແລະເອົາຄູ່ມືນີ້ໄປດ້ວຍເພາະຄຳຕອບຂອງບົດເສັງໃນຫຼັກສູດຢູ່ໃນເຫລັ້ມນີ້. ຕອນສຸດທ້າຍຈົ່ງອ້ອນວອນເພື່ອເຊິ່ງກັນແລະກັນ ແລ້ວເບິ່ງເປົ້າຫມາຍໃນ ຫມວດ 6

<u>ໃນການປະຊຸມ</u>

1. ໃຫ້ທ່ານກວດບົດເສັງໄວ້ ແລ້ວກວດອີກວ່າ ເຂົາເຮັດບົດຝຶກສຳເລັດຫຼືບໍ່?

2. ໃຫ້ເຂົາແຕ່ລະຄົນສະເຫນີຄໍາຕອບຈາກ 11.30 ມາປຽບທຽບກັນໄວ້.
3. ໃຫ້ເຂົາຕອບຄໍາຖາມຢູ່ຫນ້າປົກ ບົດທີ 11 (ໃຫ້ທ່ານຮູ້ຄໍາຕອບກ່ອນດ້ວຍເນີ!)
4. ຖາມເຂົາວ່າ ເຮົາຈະຊະນະຕໍ່ການທົດລອງຢ່າງໃດໄດ້?
5. ພະເຢຊູສາມາດເລົ່າຂໍ້ພະຄໍາພີທີ່ສໍາຄັນໄດ້ກັບປາກ,ພວກເຮົາສົມຄວນຈະຮຽນທ່ອງຂຶ້ນໃຈເຊັ່ນດຽວກັນ ຍິ່ງກວ່ານັ້ນພະເຢຊູ ຮູ້ຄວາມຫມາຍໃນແຕ່ລະຂໍ້ ໄທ້ເຂົ້າກັບຂໍ້ກ່ອນແລະຂໍ້ພາຍຫຼັງດ້ວຍ. ຖ້າເຮົາທ່ອງຂຶ້ນໃຈຂໍ້ຫນຶ່ງຂໍ້ໃດໃນພະຄໍາພີ ແຕ່ບໍ່ຮູ້ຄວາມຫມາຍຈະເປັນຢ່າງໃດ?
6. ເມື່ອພະເຢຊູພົບການທົດລອງພະອົງບໍ່ໄດ້ຕົກ ແລະຫຼົງຜິດຕາມ. ໃຫ້ເຂົາອ່ານ 1 ເປໂຕ 1:3-9 ການຖືກທົດລອງຈະເປັນຢ່າງ ໃດ?
7. ໃຫ້ຖາມພວກຜູ້ມາຮຽນວ່າ ເຂົາຖືກທົດລອງຢ່າງໃດເປັນຕົ້ນ? ເຮົາຈະຊະນະການທົດລອງນັ້ນໄດ້ຢ່າງໃດ?
8. ໃຫ້ເຂົາປຶກສາຫາລືກັນເລື່ອງການທົດລອງ ການທົດລອງຈະພາໃຫ້ເກີດເປັນຄວາມບາບໃນເວລາໃດ?

---

## ການປະຊຸມ ເທື່ອທີ 6 (ຫມວດ 6)

<u>ທ່ານຈົ່ງຕຽມຕົວກ່ອນປະຊຸມ:</u> ຕາມເຄີຍ!

<u>ໃນການປະຊຸມ</u>

1. ໃຫ້ທ່ານກວດເບິ່ງວ່າ ເຂົາຕອບຄໍາຖາມທຸກປະການບໍ່, ເຂົາຂີດເສັ້ນກ້ອງຕາມຄໍາສັ່ງໃນບົດຝຶກບໍ່ (ບາງຂໍ້ສີແດງ ບາງຂໍ້ສີຂຽວ) ໃຫ້ກວດຄໍາຕອບບົດເສັງ ໃນບົດທີ 13 14 ແລະ 15.
2. ໃຫ້ເຂົາຍົກສະເຫນີຂໍ້ທີ່ວ່າ ພະເຈົ້າບັນດົນໃຈຂອງຜູ້ທີ່ຂຽນບັນທຶກພະຄໍາພີທີ່ເຮົາເວົ້າວ່າ ພະຄໍາພີໄດ້ຖືກບັນດົນໃຈຈາກພະ ເຈົ້າ ຫມາຍຄວາມວ່າຢ່າງໃດ? (ເບິ່ງຄໍາຖາມ 13.18 ແລະ 13.22)
3. ໃຫ້ເຂົາປຶກສາຫາລືກັນຕາມຄໍາສັ່ງທີ່ຂີດເສັ້ນອ້ອມທີ່ຢູ່ຫຼັງຈາກຄໍາຖາມ 14.35
4. ໃຫ້ທ່ານໃຊ້ຂໍ້ອ້າງຢູ່ລຸ່ມຫນ້າໃນພະຄໍາພີ ເພື່ອຮຽນດ້ວຍວິທີປຽບທຽບ. ໂຢຮັນ 19:24 ຍົກມາກ່າວອ້າງຈາກໃສໃນພະຄໍາພີ ເດີມ? ໂຢຮັນ 12:40 ເດ? ແລະ ລູກາ 22:37?
5. ໃຫ້ເຂົາສະເຫນີຫຼັກຖານຈາກພາຍນອກວ່າ ພະຄໍາພີໃຫມ່ເວົ້າຄວາມຈິງ.
6. ຖ້າມີຄົນມາຕິວ່າ ບໍ່ເຊື່ອພະຄໍາພີ ເພາະພະຄໍາພີຜິດຫລາຍປະການ, ເຂົາຈະຕອບຢ່າງໃດ?

7. ໃຫ້ເຂົາເບິ່ງຫນ້າປົກບົດທີ 13 (ຫນ້າ 99) ມະນຸດຮັບພາລະຢ່າງໃດ ໃນການຂຽນບັນທຶກພະຄຳພີ ໄວ້.
8. ໃຫ້ເຂົາຮຽນເລື່ອງພະເມຊີອາຢູ່ຫນ້າປົກບົດທີ 14 ແລ້ວກວດເບິ່ງວ່າເຂົາໄດ້ຕອບຄຳຖາມເຫຼົ່ານັ້ນ ຫຼືບໍ່?

---

# ການປະຊຸມ ເທື່ອທີ 7 (ຫມວດ 7)

<u>ໃຫ້ທ່ານຕຽມຕົວໄວ້ກ່ອນປະຊຸມຕາມເຄີຍ</u> ເພື່ອຈະປະຢັດເວລາໃນປະຊຸມ ໃຫ້ຂຽນຈຸດສຳຄັນໄວ້ທຸກ ຈຸດຄື ການກວດບົດເສັງ 16 17 ແລະ 18 ໃຫ້ບັນທຶກຊື່ທຸກຄົນໄວ້ ແລະຕຽມການນະມັດສະການ, ການປຶກສາຫາລືກັນ ແລະການປິດປະຊຸມອີກດ້ວຍ.

<u>ໃນການປະຊຸມ</u>

1. ວັດຖຸສິ່ງຂອງມີການບົກຜ່ອງ 4 ປະການໃດ? ໃຫ້ຍົກສະເຫນີຂໍ້ພະຄຳພີທີ່ເຂົ້າກັບ 4 ປະການນັ້ນ. ຄວາມຍຸດຕິທຳໃນອານາຈັກຂອງພະເຈົ້າ ດີກວ່າຄວາມຍຸດຕິທຳທີ່ວັດຖຸສິ່ງຂອງສະເຫນີມາຢ່າງໃດ? (17.22)
2. ທີ່ຄຣິສຕຽນຄົນຫນຶ່ງຄົນໃດຈະຫ່ວງກັບວິນຍານຢ່າງດຽວ ບໍ່ຫ່ວງກັບຄົນທີ່ຂາດບໍ່ມີເຂົ້າກິນບໍ່ມີເຄື່ອງນຸ່ງຫົ່ມຈະເຫມາະບໍ່? ຖ້າຫ່ວງແຕ່ວັດຖຸສິ່ງຂອງຢ່າງດຽວຈະເຫມາະບໍ່? ການເມືອງແລະເສດຖະກິດມີສ່ວນສຳຄັນປານ ໃດ? (ໃຫ້ເຂົາແລກປ່ຽນ ຄວາມຄິດເຫັນກັນ)
3. ຄຣິສຕຽນສົມຄວນຈະອອກເຫື່ອແຮງຫລາຍປານໃດໃນເລື່ອງການບ້ານເມືອງແດ່,ການສັງຄົມແດ່,ໃນການຫາກິນຫລາຍແດ່?
4. ໃຫ້ເຂົາປຶກສາຫາລື ເລື່ອງຄຳຖາມໃນຫນ້າສຸດທ້າຍຂອງ ບົດທີ 17
5. ໃຫ້ເຂົາຍົກຄຳຕອບໃນ 18.14 ມາປຽບທຽບກັນ.
6. ໃຫ້ເຂົາພິຈາລະນາເລື່ອງບາດກ້າວ 2 ປະການ ໃນການຕໍ່ສູ້ຄວາມຈອງຫອງ.
7. ໃຫ້ຍົກສະເຫນີຄຳຕອບຂອງໃຜລາວ ໃນ 18.31
8. ໃນຮູບຫນ້າປົກບົດທີ 18 ທີ່ພະຍາມານມາທົດລອງພະເຢຊູນັ້ນພະອົງມີສິດທີ່ເລືອກເອົາປະການໃດ? ຖ້າພະອົງຟັງຄວາມ ຂອງພະຍາມານຜົນສຸດທ້າຍຈະເປັນຢ່າງໃດ? ເຂົາເອງອາດຈະຖືກທົດລອງ ຄ້າຍຄືກັນກໍມີ. ໃຫ້ເຂົາປຶກສາຫາລືກັນວ່າ ຜົນຂອງການຟັງຄວາມຂອງພະຍາມານຈະເປັນຢ່າງໃດ?
9. ໃຫ້ເຂົາອ່ານຈາກ 1 ຕີໂມທຽວ 6:6-10 ແລ້ວປຶກສາກັນເລື່ອງບັນຫາຄົນທຸກ ແລະບັນຫາຄົນຮັ່ງມີ (ເປັນຕົ້ນໃນຂໍ້ 10). ຄຣິສຕຽນຄວນຈະຊອກຫາຫຍັງ? ສ່ວນບົກຜ່ອງອັນຫນັກທີ່ສຸດໃນວັດຖຸສິ່ງຂອງຄືຫຍັງ? ຖ້າເຮົາຫ່ວງແຕ່ເງິນຄຳ ແລະວັດ ຖຸສິ່ງຂອງຈະເກີດຜົນຫຍັງ?

# ການປະຊຸມ ເທື່ອທີ 8 (ຫມວດ 8)

<u>ໃຫ້ທ່ານຕຽມຕົວໄວ້ກ່ອນ:</u> ໃຫ້ຕຽມໂຄງຮ່າງຊຶ່ງປະກອບດ້ວຍຈຸດສຳຄັນທຸກຈຸດຄື: ນະມັດສະການ, ເສັງໃນປະຊຸມ, ກວດບົດເສັງໃນຫຼັກສູດ, ແຈ້ງຊື່ໃນບັນທຶກ, ກວດບົດຝຶກ, ປຶກສາຫາລືກັນ ແລະ ອະທິຖານປິດ. ຫມວດນີ້ມີສ່ວນທີ່ວ່າ ດ້ວຍຄວາມຮຸນແຮງ ບົດນີ້ໃຫ້ທ່ານຍົກຕົວຢ່າງຄວາມຮຸນແຮງ ໃນຕ່າງປະເທດ ທີ່ລາຍງານທາງວິທະຍຸ, ຫຼືຫນັງສືພິມ ມາສະເຫນີໃຫ້ຫມູ່ຟັງ.

<u>ໃນການປະຊຸມ</u>

1. ໃຫ້ຫມູ່ສະເຫນີຄວາມຄິດເຫັນກັນໃນຕອນສຸດທ້າຍຂອງບົດທີ 19 (ຫນ້າ 151) ໃນໂລກທຸກມື້ນີ້ມີແຕ່ຄວາມຮຸນແຮງຫລາຍ ພວກຄຣິສຕຽນຄວນຈະຮ່ວມໃນການຮຸນແຮງນັ້ນບໍ່?
2. ໃຫ້ເຂົາຍົກຂໍ້ພະຄຳພີທີ່ວ່າດ້ວຍການສາລະພາບຜິດບາບຕໍ່ພະເຈົ້າຜົນຂອງການສາລະພາບບາບມີ ຢ່າງໃດແດ່? ເຮົາຈະອ້ອນວອນເພື່ອຄົນທີ່ບໍ່ຮັບສາລະພາບບາບຢ່າງໃດ?
3. ໃຫ້ເຂົາຮ່ວມກັນເລົ່າ 1 ໂຢຮັນ 1:9 ກັບປາກ.
4. ໃຫ້ເຂົາກັບໄປຄິດເຖິງຄຳຖາມ 20.26 ຂໍ້ທີ່ວ່າດ້ວຍຈະເອົາສິ່ງຂອງຄືນໃຫ້ມີອີກບາງຢ່າງທີ່ເອົາສິ່ງຂອງຄືນໃຫ້ບໍ່ໄດ້. (ໃຫ້ ເຂົາພາກັນຮັບພິຈາລະນາ)
5. ຖ້າເຮົາໄປສາລະພາບຕໍ່ຄົນຫນຶ່ງຄົນໃດ ແຕ່ເຂົາບໍ່ຍົກໂທດໃຫ້ຈະເຮັດຢ່າງໃດ?
6. ເຂົາເຄີຍເຫັນຄົນຢ່າງທີ່ບັນລະຍາຍໃນ 21.16 ບໍ່? ຖ້າພົບຄົນຢ່າງນັ້ນຈະຕອບເຂົາຢ່າງໃດ?
7. ໃຫ້ທ່ານຍົກສະເຫນີຕົວຢ່າງຄວາມຮຸນແຮງທີ່ຍົກເອົາມາຈາກຂ່າວວິທະຍຸ ຫຼືຫນັງສືພິມ. ໃຫ້ເຂົາຍົກຕົວຢ່າງຄວາມຮຸນແຮງ ອີກດ້ວຍ, ຄວາມຮຸນແຮງເປັນທີ່ຜິດຢູ່ສະເຫມີບໍ່? ຄວາມຮຸນແຮງອາດ ຈະເຫມາະສົມດ້ວຍມີເງື່ອນໄຂບໍ່?
8. ຖ້າຄົນຫນຶ່ງຄົນໃດສັງເກດໃນຕົວວ່າ ມີແນວໂນ້ມທີ່ມັກຄວາມຮຸນແຮງຄົນນັ້ນຄວນຈະເຮັດຢ່າງໃດ?
9. ໃຫ້ເຂົາເບິ່ງຫນ້າປົກບົດທີ 20 ຖ້າເຮົາບໍ່ຍອມຍົກຜິດຜູ້ອື່ນຕໍ່ໄປຈະເປັນຢ່າງໃດ?
10. ໃຫ້ພາກັນອ່ານ ຢາໂກໂບ 5:16 ເຮົາຄວນຈະສາລະພາບຕໍ່ຊຶ່ງກັນແລະກັນ ກັບຄວາມບາບທຸກປະ ການບໍ່? ມີບາບໃດທີ່ ສົມຄວນຈະສາລະພາບສະເພາະແຕ່ ພະເຈົ້າອົງດຽວ? ບາງເທື່ອເຮົາຈະ ສາລະພາບບາບຕໍ່ຜູ້ອື່ນເພື່ອສອງເຫດຕໍ່ໄປນີ້:
    ກ. ເພາະເຮົາເຮັດຜິດຕໍ່ຄົນຜູ້ນັ້ນ.
    ຂ. ເພາະເຮົາຕ້ອງການໃຫ້ເພິ່ນປຶກສາກັບເຮົາແລະອ້ອນວອນເພື່ອເຮົາ.

# ການປະຊຸມ ເທື່ອທີ 9 (ໝວດ 9)

<u>ໃຫ້ທ່ານຕຽມຕົວໄວ້ກ່ອນ:</u> ໃຫ້ທ່ານຕຽມຕົວໄວ້ກ່ອນຕາມເຄີຍບົດເສັງນີ້ມີບົດທີ 22 ແລະ 23, ບົດຝຶກມີແຕ່ເອົາສໍສີຂຽວຂີດເສັ້ນກ້ອງ.

<u>ໃນການປະຊຸມ</u>

1. ໃຫ້ເຂົາແລກປ່ຽນຄວາມຄິດເຫັນໃນຄຳຕອບ 22.19
2. ໃຫ້ເຂົາສະແດງລະຄອນຈັກໜ້ອຍ, ໃຫ້ຜູ້ໜຶ່ງຮັບບົດບາດຄົນທີ່ບໍ່ເຊື່ອ ແລະອີກຄົນໜຶ່ງເປັນຜູ້ທີ່ເຊື່ອ ທີ່ເວົ້າຄວາມພະ ຍານໃຫ້ເພິ່ນຟັງ. ເຂົາຈະເອົາເລື່ອງນິໂກເດມນີ້ມາເປັນຕົວຢ່າງກໍໄດ້.
3. ພະເຢຊູ ສະແດງທ່າທີຢ່າງໃດຕໍ່ຍິງຊາວຊາມາເລຍ (23.12) ໃຫ້ເຂົາອ່ານ ຟລປ 2:5-8 ພວກຄຣິສຕຽນເຮົາຄວນຈະມີທ່າ ທີໃດຕໍ່ຄົນທຸກຍາກ?
4. ໃຫ້ເຂົາອ່ານ ໂຢຮັນ 4:27 ພວກສາວົກປະຫລາດໃຈເພາະຫຍັງ? ຄົນຄຣິສຕຽນຄວນຈະມີທ່າທີຢ່າງໃດຕໍ່ເຜົ່າອື່ນໆ ທີ່ບໍ່ເຄີຍ ມີຄຣິສຕຽນຈັກຄົນ? ໃນແຂວງຂອງໝູ່ທີ່ມາຮຽນດ້ວຍກັນນີ້ ມີເຜົ່າໃດ ພາສາໃດ ທີ່ບໍ່ມີຄຣິສຕຽນຈັກຄົນເທື່ອ? ເຜົ່າເຫຼົ່າ ນັ້ນມີສ່ວນໃນ ມັດທາຍ 28:19-20 ທີ່ພະເຢຊູ ຊົງສັ່ງໃຫ້ລູກສິດໄປປ່າວປະກາດເຖິງທຸກຊາດບໍ່?
5. ທ່ານຈຶ່ງຖາມເຂົາວ່າ ຈະອະທິບາຍການກຳເນີດໃຫມ່ຕໍ່ຄົນທີ່ຢາກເຊື່ອຢ່າງໃດ? ການກຳເນີດໃຫມ່ເປັນສິ່ງທີ່ຈຳເປັນບໍ່? ຈຳເປັນຢ່າງໃດ? ຈະເກີດມີຜົນໃນຊີວິດຢ່າງໃດ?
6. ໃຫ້ເຂົາແລກປ່ຽນຄວາມຄິດເຫັນກັນໃນຄຳຕອບ 22.16 ເຂົາເຄີຍຮູ້ແລະເຫັນຄົນທີ່ມີຜົນແບບນັ້ນບໍ່?
7. ໃຫ້ທ່ານແນ່ໃຈວ່າ ເຂົາຈະເຂົ້າໃຈກ່ຽວກັບນ້ຳອັນມີຊີວິດທີ່ປຽບເຖິງ ພະວິນຍານບໍລິສຸດ.

---

# ການປະຊຸມ ເທື່ອທີ 10 (ໝວດ 10)

ໃຫ້ທ່ານຕຽມຕົວໄວ້ກ່ອນ: ທ່ານຈຶ່ງຕຽມໂຄງຮ່າງໄວ້ຕາມເຄີຍບົດຝຶກໃນໝວດນີ້ໃຫ້ໃຊ້ສີແດງຂີດກ້ອງ.

<u>ໃນການປະຊຸມ</u>

1. ເປົ້າໝາຍຂອງພະເຢຊູ ໃນການປ່າວປະກາດກໍຄື ຈະກະທຳຕາມນ້ຳພະໄທຂອງພະເຈົ້າ. ໃນລູກາ 4:18-19 ຈະໃຫ້ປ່າວ ປະກາດຕໍ່ໃຜກ່ອນ.

2. ຄົນຄຣິສຕຽນໃນສະໄຫມນີ້ ຈະຮັບອຳນາດຂອງພະວິນຍານບໍລິສຸດເຊັ່ນດຽວກັນບໍ່? ໃຫ້ເຂົາຍົກຕົວຢ່າງ.

3. ພະເຢຊູ ອອກຈາກນາຊາເລັດ ເພາະພະອົງຈະໄປປະກາດໃນທີ່ອື່ນ. ຖ້າຍາດພີ່ນ້ອງ ຫຼື ເພື່ອນບ້ານປະຕິເສດພວກເຮົາ ສິນ ຄວນຈະເຮັດຢ່າງໃດ?

4. ເປັນຫຍັງພະເຢຊູ ຕັ້ງຕົ້ນເທສະຫນາໃນບ້ານຂອງພະອົງເອງກ່ອນ? ທຳມະດາເຮົາຈະປ່າວປະກາດໃນບ້ານເກີດເມືອງນອນກ່ອນ ຫຼື ໄປບ່ອນອື່ນກ່ອນ?

5. ເປັນຫຍັງເຮົາຕ້ອງອາໄສທັງອຳນາດຂອງພະວິນຍານ ແລະອຳນາດຂອງພະທຳພ້ອມກັນ. ຖ້າເນັ້ນຄຳແຕ່ຝ່າຍດຽວອາດຈະ ເກີດບັນຫາໃດແດ່?

6. ຄົນຄຣິສຕຽນເຮົາມີສິດທິພິເສດກໍ່ວ່າໄດ້ ເພາະເຮົາມີທັງພະຄຳພີ ແລະພະວິນຍານຂອງ ພະເຈົ້າດ້ວຍ. ຜູ້ມີສິດທິພິເສດຢ່າງ ນັ້ນ ອາດຈະຂີ້ຄ້ານໄປໃນທາງນອງໃດ? ອາດຈະປຽບກັບໄທບ້ານນາຊາເລັດໄດ້ຢ່າງໃດ?

7. ໃຫ້ທ່ານເປີດເບິ່ງຕາຕະລາງຢູ່ຫນ້າປົກບົດທີ 24 ຈຶ່ງໃຊ້ເປັນພື້ນຖານເພື່ອທວນຄືນເຫດການໃນສະໄຫມປີທີ່ພະເຢຊູຕຽມຕົວ.

8. ໃຫ້ພວກທີ່ມາຮຽນສະເຫນີຄວາມພະຍານເຊິ່ງກັນແລະກັນ.

9. ໃຫ້ເຂົາປຶກສາຫາລືກັນວ່າ ເຂົາຈະເອົາບົດຮຽນເຫຼົ່ານີ້ມານຳໃຊ້ຢ່າງໃດ?

---

## ການປະຊຸມ ທວນຄືນ (ຫຼື ເສັງສຸດທ້າຍ ກໍໄດ້)

<u>ຈົ່ງສັງເກດ:</u> ມາເຖິງປະຊຸມນີ້ທ່ານອາດຈະເລືອກໄດ້ວ່າຈະຈັດເອົາປະຊຸມນີ້ໄວ້ສະເພາະເພື່ອການທວນຄືນທັງຫຼັກສູດ ມັດທາຍ ເຫລັ້ມທີ 2 ນີ້ບໍ່? ຫຼື ຈະຈັດໃຫ້ມີການເສັງສຸດທ້າຍທັນທີ ແລ້ວແຕ່ທ່ານຈະເລືອກ. ພວກຜູ້ມາຮຽນພ້ອມຈະເສັງບໍ່ ຫຼື ຕ້ອງການຮຽນຄືນອີກບໍ່?

ຖ້າຈະທວນຄືນມີຫລາຍວິທີທາງທີ່ຈະເລືອກໄດ້ຄື:

1. ໃຫ້ເອົາເປົ້າຫມາຍໃນແຕ່ລະຫມວດມາເປັນພື້ນຖານ.

2. ໃຫ້ເອົາຄຳຖາມໃນບົດເສັງແຕ່ລະບົດມາຖາມເຂົາ.

3. ເອົາຄຳຖາມໃນເປົ້າຫມາຍແດ່ ເອົາແຕ່ບົດໃດທີ່ບໍ່ທັນໄດ້ດີ ແລະຍັງຮູ້ສຶກອ່ອນຢູ່ ໃຫ້ເຂົາຕອບຈາກ ບົດ\eh ເສັງ. ທ່ານຈົ່ງບອກໃຫ້ເຂົາເຂົ້າໃຈວ່າ ບົດເສັງສຸດທ້າຍນັ້ນຈະຂຶ້ນຢູ່ກັບເປົ້າຫມາຍໃນແຕ່ລະ ຫມວດເປັນຕົ້ນ.

# ບົດເສັງສຸດທ້າຍ (ອາດຈະຖືກັບປະຊຸມທີ 13)

ໃນບົດເສັງສຸດທ້າຍຕໍ່ໄປນີ້ທ່ານອາດຈະພິມກ່ອນແລ້ວແຈກໃຫ້ເຂົາຜູ້ລະໃບຫຼືອາດຈະອ່ານໃຫ້ເຂົາຟັງ. ຢ່າໃຫ້ເຂົາໃຊ້ພະຄຳພີ ຫຼືເຫລັ້ມອື່ນໆ ໃຫ້ເຂົານັ່ງໄກຈາກກັນແລະກັນເພື່ອເຂົາຈະ ບໍ່ເຫັນເຈ້ຍຂອງຜູ້ອື່ນ.ຈົ່ງອ້ອນວອນກ່ອນຈະຕັ້ງຕົ້ນ ແລະຫຼັງຈາກຈົບລົງອີກດ້ວຍ.

*ບົດເສັງຈົບເຫລັ້ມທີ II*

1. ໃນຂ່າວປະເສີດ 4 ເຫລັ້ມ ແມ່ນເຫລັ້ມໃດລາຍງານເລື່ອງຕ່າງກັບຫມູ່? (ຕອບ: ໂຢຮັນ)
2. ເຫດການປະການທີ 3 ໃນສະໄຫມປີທີ່ຕຽມຕົວຄືຫຍັງ? (ຕອບ: ມານທົດລອງພະເຢຊູ)

3-4. ໃຫ້ທ່ານສະເຫນີບາດກ້າວໃນການຖິ້ມໃຈເກົ່າເອົາໃຈໃຫມ່ຢ່າງນ້ອຍ2 ປະການ. (ຕອບ: ຢູ່ໃນ 3.14)

5. ແມ່ນພວກຟາລິຊາຍ ຫຼື ພວກຊາດູກາຍທີ່ມັກເອົາຄຳສອນ ທີ່ຕົກທອດມາຈາກເຖົ້າເກົ່າບູຮານມາ ເພີ້ມໃສ່ພະຄຳພີ? (ຕອບ: ຟາລີຊາຍ)
6. ພວກເດັກນ້ອຍຊາດຢິວທຸກຄົນຮຽນຮູ້ວ່າມີ ພະເຈົ້າຈັກອົງ? (ຕອບ: ອົງດຽວ)
7. ແມ່ນຂໍ້ໃດໃນພະຄຳພີທີ່ອ້າງເຖິງທັງ 3 ພະພາກ ຂອງພະເຈົ້າ ທີ່ລວມໃນການໃຫ້ເຮົາໄດ້ລອດພົ້ນ ບາບ? (ຕອບ: 1 ເປໂຕ 1:1-2)
8. ພະວິນຍານບໍລິສຸດມີສ່ວນໃດໃນການໃຫ້ເຮົາໄດ້ລອດພົ້ນ? (ຕອບ: ຊົງຊຳຮະເຮົາໃຫ້ບໍລິສຸດ ມາເຂົ້າປະຈຳກັບເຮົາ ກໍໄດ້)
9. ໃຫ້ຍົກສະເຫນີເຫດຜົນມາຢ່າງຫນ້ອຍ ຫນຶ່ງປະການທີ່ເຂົາຂຽນຫຼັກຄວາມເຊື່ອຕາມເຫຼົ່າອັກຄະສາວົກ. (ຕອບ: ເບິ່ງ 9.43)
10. ໃຫ້ສະເຫນີຄຸນລັກສະນະຂອງພະເຈົ້າ ຢ່າງຫນ້ອຍປະການຫນຶ່ງແລະບອກຂໍ້ພະຄຳພີທີ່ເປັນຫຼັກຖານດ້ວຍ. (ຕອບ:ເບິ່ງ 10.53)
11. ໃນການທົດລອງຢູ່ຫຼັງຄາພະວິຫານ ພະຍາມານທົດລອງພະເຢຊູ ໃຫ້ໄດ້ຫຍັງປາສະຈາກພະເຈົ້າ? (ຕອບ: ໄດ້ຊື່ສຽງດີ ຫຼື ຮັບກຽດ)
12. ພະເຢຊູ ໃຊ້ເຄື່ອງອາວຸດສອງປະການມາຕໍ່ສູ້ການທົດລອງ, ອັນຫນຶ່ງຄື: ພະວິນຍານຂອງພະເຈົ້າອີກອັນຫນຶ່ງເດ? (ຕອບ: ພະຄຳຂອງພະເຈົ້າ)

13-14. ຫຼັກຖານປະການຫນຶ່ງທີ່ພະຄຳພີເປັນພະທຳຂອງພະເຈົ້າແລະບໍ່ມີຜິດຄືຄຳທຳນວາຍເລື່ອງພະເມຊີອາໃນພະຄຳພີເດີມ ທີ່ ສຳເລັດໃນພະຄຳພີໃຫມ່. ໃຫ້ທ່ານຍົກສະເຫນີຢ່າງຫນ້ອຍສອງ ປະການ. (ຕອບ: ເບິ່ງຫນ້າປົກບົດທີ 14)

15. ໃຫ້ຍົກສະເຫນີຫຼັກຖານຈາກພາຍນອກທີ່ຢັ້ງຢືນວ່າ ພະຄຳພີບໍ່ມີຜິດ ຢ່າງຫນ້ອຍ 1 ປະການມາ? (ຕອບ:1 ປະການຈາກ 4 ປະການດັ່ງຕໍ່ໄປນີ້:

ກ. ເຂົາຂຽນພະຄຳພີ ຫຼັງຈາກພະເຢຊູກັບຂຶ້ນສະຫວັນບໍ່ດົນ ປານໃດ
ຂ. ຂ່າວທີ່ຂຽນບັນທຶກໃນພະຄຳພີໃຫມມາຈາກຜູ້ທີ່ເຫັນກັບຕາຕົນເອງແລະຜູ້ທີ່ໄດ້ຍິນການເລົ່າຄຳພະຍານຈາກ ສາວົກ.
ຄ. ພະຄຳພີທີ່ເຮົາມີຢູ່ໃນຍຸກນີ້ ມີຄວາມສອນບໍ່ຜິດກັບຕົ້ນສະບັບ.
ງ. ມີຫຼັກຖານ ຈາກວັດຖຸຊຶ່ງເປັນເຄື່ອງບູຮານຄະດີ.)

16-17. ໃຫ້ຍົກເຫດຜົນຢ່າງຫນ້ອຍ ສອງປະການທີ່ວັດຖຸສິ່ງຂອງບໍ່ສາມາດຈະແກ້ບັນຫາຄວາມບໍ່ຍຸດຕິທຳ, ດ້ານສັງຄົມ, ດ້ານ ເສດຖະກິດ, ແລະດ້ານການເມືອງ. (ຕອບ: ເບິ່ງ 16.33)

18. ບາດກ້າວທີສອງ ເພື່ອຕໍ່ສູ້ການທົດລອງບໍ່ໃຫ້ຈອງຫອງຄືຫຍັງ? (ຕອບ: ຖ່ອມໃຈລົງ)

19-20. ໃຫ້ຍົກສະເຫນີຜົນທີ່ເກີດມາຈາກການຮັບສາລະພາບຜິດບາບຢ່າງຫນ້ອຍ 2 ປະການ. (ຕອບ:ເບິ່ງ 20.47)

21. ເຮົາຈະຫຼີກເວັ້ນຈາກການຮັບສາລະພາບຜິດບາບຢ່າງບໍ່ເອົາຈິງເອົາຈັງຢ່າງໃດ? (ຕອບ: ຍົກສະເຫນີບາບຂອງເຮົາ ຢ່າງລະອຽດ)

22. ໃນເມື່ອເຮົາເກີດດ້ານຮ່າງກາຍເຮົາເກີດຈາກພໍ່ແມ່, ການບັງເກີດໃຫມ່ເຮົາເກີດຈາກໃຜ? (ຕອບ: ພະວິນຍານ)

23-24. ໃຫ້ຍົກສະເຫນີຢ່າງຫນ້ອຍ 2 ປະການ ທີ່ເຫັນລັກສະນະຂອງຄຳເທດສະຫນາໃຕ້ອຳນາດຂອງພະວິນຍານບໍລິສຸດ. (ຕອບ: ເບິ່ງ 24.23)

25. ຕາມຄຳລາຍງານໃນພະຄຳພີ ຄຳເທດສະຫນາທຳອິດຂອງພະເຢຊູຢູ່ໃສ? (ຕອບ: ນາຊາເລັດ)

*ໃຫ້ບອກເຂົາວ່າຈະຕັ້ງຕົ້ນເຫລັ້ມທີ 3 ໃນເວລາໃດແລະບ່ອນໃດ?*
*ຖ້າເຂົາຈະແຈ້ງຊື່ໄວ້ກ່ອນກໍຍິ່ງດີ.*

# ບົດສອບເສັງ ມັດທາຍ 2 ພາກຮຽນ 1

1. ໃນຂ່າວປະເສີດ 4 ເຫລັ້ມ, ແມ່ນເຫລັ້ມໃດລາຍງານເລື່ອງຕ່າງກັບຫມູ່?

   ກ. ມັດທາຍ ຂ. ມາລະໂກ ຄ. ລູກາ ງ. ໂຢຮັນ

2. ເຫດການປະການທີ 3 ໃນສະໄຫມປີທີ່ຕຽມຕົວຄືຫຍັງ?

   ກ. ໂຢຮັນບັບຕິສະໂຕເທດສະຫນາ ຂ. ມານທົດລອງພະເຢຊູ

   ຄ. ພະເຢຊູຮັບບັບຕິສະມາ

3. ບາດກ້າວໃນການຖິ້ມໃຈເກົ່າເອົາໃຈໃຫມ່ ທັງຫມົດມີຈັກປະການ?

   ກ. 5 ຂ. 4 ຄ. 3 ງ. 6

4. ແມ່ນພວກໃດທີ່ມັກເອົາຄໍາສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານມາເພີ້ມໃສ່ພະຄໍາພີ?

   ກ. ພວກຊາດູກາຍ ຂ. ພວກນັກທໍາ

   ຄ. ພວກຟາລີຊາຍ ງ. ຄົນເກັບພາສີ

5. ພວກເດັກນ້ອຍຊາດຢິວທຸກຄົນຮຽນຮູ້ວ່າມີພະເຈົ້າຈັກອົງ?

   ກ. 1 ຂ. 2 ຄ. 3 ງ. 4

6. ໃນຂໍ້ພະຄໍາພີຕໍ່ໄປນີ້ ແມ່ນຂໍ້ໃດທີ່ອ້າງເຖິງ 3 ພະພາກຂອງພະເຈົ້າທີ່ຮ່ວມໃນການໃຫ້ເຮົາໄດ້ພົ້ນບາບ?

   ກ. 1 ກລທ 6:20 ຂ. 1 ເປໂຕ 1:1-2 ຄ. ມັດທາຍ 28:19 ງ. ໂຢຮັນ 20:28

7. ພະວິຍານບໍລິສຸດມີສ່ວນຢ່າງໃດໃນການໃຫ້ເຮົາໄດ້ລອດພົ້ນ?

   ກ. ເລືອກເຮົາໄວ້

   ຂ. ຊົງຊໍາຮະເຮົາໃຫ້ບໍລິສຸດ ຫຼືເຂົ້າມາປະຈໍາໃນຊີວິດເຮົາ

   ຄ. ໄຖ່ໂທດບາບຂອງເຮົາ

8. ເຫດຜົນທັງຫມົດມີຈັກປະການທີ່ເຂົາຂຽນຫລັກຄວາມເຊື່ອອຕາມເຫຼົ່າອັກຄະສາວົກ?

   ກ. 1 ຂ. 2 ຄ. 3 ງ. 4

9. ໃຫ້ສະເຫນີຄຸນສົມບັດ ຫຼືພະລັກສະນະຂອງພະເຈົ້າມີຫຍັງແດ່?

   ກ. ພະເຈົ້າຢູ່ທຸກທີ່ທຸກບ່ອນ

   ຂ. ພະເຈົ້າຮູ້ບາງສິ່ງບາງຢ່າງ

   ຄ. ພະເຈົ້າຮູ້ທັງຫມົດ

   ງ. ພະເຈົ້າມີລິດທານຸພາບສູງສຸດ

10. ພະເຢຊູໃຊ້ອາວຸດຈັກປະການມາຕໍ່ສູ້ກັບການທົດລອງ?

    ກ. 1 ຂ. 2 ຄ. 3 ງ. 4

# ບົດສອບເສັງ ມັດທາຍ 2 ພາກຮຽນ 1

1. ຄຳທຳນວາຍໃນພະຄຳພີເດີມເລື່ອງພະເມຊີອາ ທີ່ສຳເລັດໃນພະຄຳພີໃຫມ່ທັງຫມົດມີຈັກປະການ?

   ກ. 5 ຂ. 6 ຄ. 7 ງ. 8

2. ຫລັກຖານພາຍນອກທີ່ຢັ້ງຢືນວ່າພະຄຳພີບໍ່ມີຜິດ ທັງຫມົດມີຈັກປະການ?

   ກ. 2 ຂ. 1 ຄ. 4 ງ. 3

3. ວັດຖຸສິ່ງຂອງມີຂໍ້ບົກຜ່ອງຈັກປະການ?

   ກ. 4 ຂ. 3 ຄ. 2 ງ. 1

4. ມີບາດກ້າວຈັກປະການທີ່ຈະໃຫ້ເຮົາຊະນະຄວາມຈອງຫອງໄດ້?

   ກ. 1 ຂ. 2 * ຄ. 3 ງ. 4

5. ໃນການທົດລອງຂອງພະເຢຊູ 3 ປະການນັ້ນ ແມ່ນປະການໃດທີ່ວ່າດ້ວຍການຕັ້ງອານາຈັກສະຫວັນໄວ້?

   ກ. ໃນປ່າ ຂ. ໃນຫລັງຄາພະວິຫານ

   ຄ. ໃນພູສູງ

6. ຜົນທີ່ເກີດຈາກການຮັບສາລະພາບຜິດບາບ ມີຈັກປະການ?

   ກ. 1 ຂ. 3 ຄ. 4 ງ. 2

7. ເຮົາຈະຫລີກເວັ້ນຈາກການຮັບສາລະພາບບາບທີ່ບໍ່ເອົາຈິງເອົາຈັງຢ່າງໃດ?

   ກ. ຍົກສະເຫນີບາບຂອງເຮົາຢ່າງລະອຽດ

   ຂ. ຍົກເຫນີບາບພໍລວມໆ

   ຄ. ທຸກຄົນໃນໂລກກໍເຮັດບາບເຫມືອນກັນພ້ອມທັງເຮົາເອງດ້ວຍ

   ງ. ປິດບັງບາບໄວ້ບໍ່ຕ້ອງສາລະພາບ

8. ໃນເມື່ອເຮົາເກີດດ້ານຮ່າງກາຍເຮົາເກີດຈາກພໍ່ແມ່ ການບັງເກີດໃຫມ່ເຮົາເກີດຈາກໃຜ?

   ກ. ເກີດຈາກພໍ່ແມ່ ຂ. ເກີດຈາກພະວິນຍານ

   ຄ. ເກີດຈາກພະບັນຍັດ ງ. ເກີດຈາກຄວາມຊອບທຳ

9. ເຮົາເຫັນລັກສະນະຂອງຄຳເທດສະຫນາໃຕ້ອຳນາດຂອງພະວິນຍານບໍລິສຸດຈັກປະການ?

   ກ. 3 ຂ. 4 ຄ. 2 ງ. 1

10. ຕາມຄຳລາຍງານໃນພະຄຳພີ ຄຳເທດສະຫນາທຳອິດຂອງພະເຢຊູຢູ່ໃສ?

    ກ. ຄາລີເລ ຂ. ຢູດາ ຄ. ນາຊາເລັດ ງ. ກາເປນາອູມ